ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

**ເລກທີ**.....170.../**ນ.ຍ**

ວັນທີ 26-11-2004

# ດຳລັດ

## ວ່າດ້ວຍດັດສະນີເງິນເດືອນພື້ນຖານຂອງ
## ພະນັກງານການນຳລະດັບສູງ

- ອີງຕາມຕາຕະລາງເງິນເດືອນຂອງພະນັກງານການນຳລະດັບສູງ ງວດ III 2003 - 2004 ທີ່ໃຊ້ໃນປະຈຸບັນ ເຫັນວ່າບໍ່ທັນໄດ້ກຳນົດຊັ້ນ-ຂັ້ນ ແລະ ດັດສະນີເປັນລະບົບ.
- ອີງຕາມຕາຕະລາງດັດສະນີເງິນເດືອນຂອງລັດຖະກອນ ສະບັບລົງວັນທີ 29/5/2004 ຊຶ່ງພວມປະຕິບັດຢູ່ໃນປະຈຸບັນ.
- ອີງຕາມການເຫັນດີຂອງກົມການເມືອງສູນກາງພັກ.

## ນາຍົກລັດຖະມົນຕີ ອອກດຳລັດ :

**<u>ມາດຕາ 1</u>** : ຫຼັກການ.

- ການກຳນົດດັດສະນີເງິນເດືອນອອກໃຫ້ພະນັກງານການນຳລະດັບສູງ ເຫັນວ່າ : ເມື່ອເອົາມູນຄ່າດັດສະນີຄູນໃຫ້ດັດສະນີທີ່ກຳນົດໄວ້ແລ້ວ ຕ້ອງໃຫ້ເງິນເດືອນພື້ນຖານເພີ່ມຂຶ້ນ.
- ຄຳນຶງເຖິງການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມ ເພື່ອໃຫ້ດ້ານງົບປະມານສາ ມາດຕອບສະໜອງໄດ້.

**<u>ມາດຕາ 2</u>** : ຜົນປະໂຫຍດຂອງການກຳນົດດັດສະນີ.

- ເມື່ອກຳນົດ ຫຼື ຕົກລົງເອົາດັດສະນີເປັນທາງການແລ້ວ, ຈະປັບປຸງເງິນເດືອນພື້ນຖານແຕ່ລະຄັ້ງພຽງແຕ່ຕົກລົງປ່ຽນແປງມູນຄ່າດັດສະນີເທົ່ານັ້ນ ແລະ ມີຄວາມສະດວກໃນການຄິດໄລ່.

**ມາດຕາ 3** : ກຳນົດຊັ້ນ, ຂັ້ນເງິນເດືອນພື້ນຖານຂອງພະນັກງານການນຳລະດັບສູງ ຈັດຢູ່ຊັ້ນ 6 ແລະ ແບ່ງອອກເປັນ 6 ຂັ້ນຕາມລະດັບດັ່ງນີ້ :

+ຊັ້ນ 6 ຂັ້ນ 6
+ຊັ້ນ 6 ຂັ້ນ 5
+ຊັ້ນ 6 ຂັ້ນ 4
+ຊັ້ນ 6 ຂັ້ນ 3
+ຊັ້ນ 6 ຂັ້ນ 2
+ຊັ້ນ 6 ຂັ້ນ 1

**ມາດຕາ 4** : ການຈັດເຂົ້າຊັ້ນ ແລະ ຂັ້ນເງິນເດືອນພື້ນຖານຂອງພະນັກງານການນຳລະດັບສູງ :

ການຈັດເຂົ້າຊັ້ນ ແລະ ຂັ້ນເງິນເດືອນຂອງພະນັກງານການນຳລະດັບສູງ : ແມ່ນຈັດໃຫ້ຜູ້ທີ່ພວມດຳລົງຕຳແໜ່ງ, ອອກພັກຜ່ອນຮັບເບັ້ຍບຳນານ ແລະ ພົ້ນຕຳແໜ່ງບໍ່ແມ່ນກໍລະນີຍ້ອນມີຄວາມຜິດທາງວິໄນ ຈະໄດ້ຈັດເຂົ້າຊັ້ນຂັ້ນດັ່ງຕໍ່ໄປນີ້ :

+ ຈັດເຂົ້າຊັ້ນ 6 ຂັ້ນ 6 ແມ່ນ : ຜູ້ທີ່ໄດ້ດຳລົງຕຳແໜ່ງປະທານພັກ ຄວບຕຳແໜ່ງປະທານປະເທດ.

+ ຈັດເຂົ້າຊັ້ນ 6 ຂັ້ນ 5 ແມ່ນ : ຜູ້ທີ່ໄດ້ດຳລົງຕຳແໜ່ງປະທານພັກ; ປະທານສະພາແຫ່ງຊາດ; ປະທານປະເທດ; ນາຍົກລັດຖະມົນຕີ.

+ ຈັດເຂົ້າຊັ້ນ 6 ຂັ້ນ 4 ແມ່ນ: ຜູ້ທີ່ໄດ້ດຳລົງຕຳແໜ່ງກຳມະການກົມການເມືອງສູນກາງພັກ.

+ ຈັດເຂົ້າຊັ້ນ 6 ຂັ້ນ 3 ແມ່ນ : ຜູ້ທີ່ໄດ້ດຳລົງຕຳແໜ່ງເລຂາທິການສູນກາງພັກ; ຮອງປະທານສະພາແຫ່ງຊາດ; ຮອງປະທານປະເທດ; ຮອງນາຍົກລັດຖະມົນຕີ.

+ ຈັດເຂົ້າຊັ້ນ 6 ຂັ້ນ 2 ແມ່ນ : ຜູ້ທີ່ໄດ້ດຳລົງຕຳແໜ່ງກຳມະການສູນກາງພັກ; ລັດຖະມົນຕີວ່າການ; ປະທານ ແລະ ຫົວໜ້າອົງການຂອງພັກ, ລັດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ຕຳແໜ່ງທຽບເທົ່າ. ປະທານອົງການທີ່ເປັນສະມາຊິກລັດຖະບານ; ຫົວໜ້າກຳມາທິການ ແລະ ຫ້ອງວ່າການສະພາແຫ່ງຊາດ; ຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ; ເຈົ້າຄອງນະຄອນຫຼວງວຽງຈັນ; ເລຂາພັກແຂວງທັງຄວບຕຳແໜ່ງເຈົ້າແຂວງ.

+ ຈັດເຂົ້າຊັ້ນ 6 ຂັ້ນ 1 ແມ່ນຜູ້ດຳລົງຕຳແໜ່ງລັດຖະມົນຕີຊ່ວຍວ່າການ; ຮອງປະທານ ແລະ ຮອງຫົວໜ້າອົງການຂອງພັກ, ລັດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຮອງປະທານອົງການທີ່ເປັນສະມາຊິກລັດຖະບານ; ຮອງກຳມາທິການ; ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ; ເຈົ້າແຂວງບໍ່ຄວບຕຳແໜ່ງເລຂາພັກແຂວງ; ເລຂາພັກແຂວງບໍ່ຄວບຕຳແໜ່ງເຈົ້າແຂວງ.

**ມາດຕາ 5** : ກຳນົດດັດສະນີເງິນເດືອນພື້ນຖານ ແລະ ມູນຄ່າດັດສະນີ.

- ການກຳນົດດັດສະນີເງິນເດືອນແມ່ນເລີ່ມແຕ່ສູງຫາຕ່ຳ ລະອຽດດັ່ງນີ້ :

* ຊັ້ນ 6 ຂັ້ນ 6 ເທົ່າກັບ 650 ດັດສະນີ.
* ຊັ້ນ 6 ຂັ້ນ 5 ເທົ່າກັບ 585 ດັດສະນີ.
* ຊັ້ນ 6 ຂັ້ນ 4 ເທົ່າກັບ 530 ດັດສະນີ.
* ຊັ້ນ 6 ຂັ້ນ 3 ເທົ່າກັບ 485 ດັດສະນີ.
*.ຊັ້ນ 6 ຂັ້ນ 2 ເທົ່າກັບ 450 ດັດສະນີ.
* ຊັ້ນ 6 ຂັ້ນ 1 ເທົ່າກັບ 425 ດັດສະນີ.

ສ່ວນເງິນເດືອນພື້ນຖານຈະມີການປ່ຽນແປງຕາມມູນຄ່າດັດສະນີທີ່ລັດຖະບານກຳນົດອອກແຕ່ລະໄລຍະ.

**ມາດຕາ 6** : ກຳນົດເງິນອຸດໜູນຕຳແໜ່ງພະນັກງານການນຳລະດັບສູງ ແມ່ນອຸດໜູນຜູ້ທີ່ພວມດຳລົງຕຳແໜ່ງຄຸ້ມຄອງບໍລິຫານອົງການໃດໜຶ່ງ ຊຶ່ງກຳນົດເປັນ 6 ປະເພດຕຳແໜ່ງດັ່ງນີ້ :

- ປະເພດ 1 ແມ່ນ: ປະທານພັກຄວບຕຳແໜ່ງປະທານປະເທດອຸດໜູນ 300.000 ກີບ/ເດືອນ
- ປະເພດ 2 ແມ່ນ : ຕຳແໜ່ງປະທານພັກ; ປະທານປະເທດ; ປະທານສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ; ຜູ້ປະຈຳການກົມການເມືອງ ອຸດໜູນ 250.000 ກີບ/ເດືອນ.
- ປະເພດ 3 ແມ່ນ : ກົມການເມືອງສູນກາງພັກ ອຸດໜູນ 200.000 ກີບ/ເດືອນ.
- ປະເພດ 4 ແມ່ນ : ຄະນະເລຂາທິການສູນກາງພັກ; ຮອງປະທານປະເທດ, ຮອງປະທານສະພາແຫ່ງຊາດ, ຮອງນາຍົກລັດຖະມົນຕີ ອຸດໜູນ 150.000 ກີບ/ເດືອນ.
- ປະເພດ 5 ແມ່ນ : ລັດຖະມົນຕີວ່າການ, ປະທານ ແລະ ຫົວໜ້າອົງການຂອງພັກ, ອົງການຈັດຕັ້ງມະຫາຊົນ ແລະຕຳແໜ່ງທຽບເທົ່າ; ປະທານອົງການທີ່ເປັນສະມາຊິກລັດຖະບານ; ຫົວໜ້າກຳມາທິການ ແລະ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ; ຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ; ເຈົ້າຄອງນະຄອນຫຼວງວຽງຈັນ; ເລຂາພັກແຂວງທັງຄວບຕຳແໜ່ງເຈົ້າແຂວງ ອຸດໜູນ 100.000 ກີບ/ເດືອນ.
- ປະເພດ 6 ແມ່ນ : ຕຳແໜ່ງລັດຖະມົນຕີຊ່ວຍວ່າການ; ຮອງປະທານ ແລະ ຮອງຫົວໜ້າອົງການຂອງພັກ,ລັດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ຕຳແໜ່ງທຽບເທົ່າ; ຮອງປະທານອົງການທີ່ເປັນສະມາຊິກລັດຖະບານ, ຮອງຫົວໜ້າກຳມາທິການ ແລະ ຫ້ອງວ່າການສະພາແຫ່ງຊາດ; ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ; ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງບໍ່ໄດ້ຄວບຕຳແໜ່ງເລຂາພັກແຂວງ ແລະ ເລຂາພັກແຂວງບໍ່ໄດ້ຄວບຕຳແໜ່ງເຈົ້າແຂວງ; ຫົວໜ້າອົງການທຽບເທົ່າທະບວງ ອຸດໜູນ 50.000 ກີບ/ເດືອນ.

**ມາດຕາ 7** : ກໍລະນີຖ້າມີການເພີ່ມເງິນເດືອນ ຈະໄດ້ເພີ່ມແຕ່ມູນຄ່າດັດສະນີ, ສ່ວນຊັ້ນ-ຂັ້ນຍັງຮັກສາຄືເກົ່າ.

**ມາດຕາ 8** : ຖ້າຫາກມີການປ່ຽນແປງໜ້າທີ່ຕຳແໜ່ງເງິນເດືອນພື້ນຖານຍັງຮັກສາຄືເກົ່າ, ມີແຕ່ປ່ຽນ

ແປງເງິນອຸດໜູນຕຳແໜ່ງ, ຈະໄດ້ຮັບເງິນອຸດໜູນຕາມຕຳແໜ່ງໃໝ່. ຖ້າກໍລະນີຄວບຕຳແໜ່ງ, ຕຳແໜ່ງໃດສູງກວ່າແມ່ນໃຫ້ເອົາຕຳແໜ່ງນັ້ນ.

<u>**ມາດຕາ 9**</u> : ໃຫ້ຫ້ອງວ່າການສູນກາງພັກ ເປັນຜູ້ຄົ້ນຄວ້າຄິດໄລ່ເງິນຕົວຈິງໃຫ້ພະນັກງານການນຳລະດັບສູງແຕ່ ຊັ້ນ 6 ຂັ້ນ 3 ຂຶ້ນໄປ ສ່ວນຊັ້ນ 6 ຂັ້ນ 2 ລົງມາແມ່ນມອບໃຫ້ ແຕ່ລະກະຊວງ-ອົງການ ແລະ ຫ້ອງຖິ່ນກ່ຽວຂ້ອງເປັນຜູ້ຄິດໄລ່.

<u>**ມາດຕາ 10**</u>: ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ດຳລັດ ຫຼື ຂໍ້ກຳນົດອື່ນໆທີ່ຂັດກັບດຳລັດສະບັບນີ້ໃຫ້ລົບລ້າງ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ